ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທ່ານ ຜູ້ວ່າການ ທຫລ ຜ່ານຮ່າງກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX




ໃນວັນທີ 12 ກໍລະກົດ 2023 ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຜ່ານຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະມາຊິກສະພາແຫ່ງຊາດຊຸດທີ IX, ໂດຍການເປັນປະທານຂອງ ທ່ານ ສົມມາດ ພົນເສນາ ຮອງປະທານສະພາແຫງຊາດ.

ຜູ້ວ່າການ ທຫລ ໄດ້ສະເໜີວ່າ: ເຫດຜົນ, ຄວາມຈຳເປັນໃນການປັບປຸງ ແລະ ບາງເນື້ອໃນສຳຄັນ ທີ່ໄດ້ມີການປັບປຸງໃນຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ ຊຶ່ງເປັນກົດໝາຍໜຶ່ງທີ່ມີຄວາມສຳຄັນໃນວຽກງານຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວຂອງທະນາຄານທຸລະກິດ ທັງເປັນບ່ອນອີງພື້ນຖານໃຫ້ແກ່ທະນາຄານແຫ່ງ ສປປ ລາວ ໃນການກຳນົດລະບຽບການສະເພາະ ເພື່ອຄຸ້ມຄອງກວດກາ ທະນາຄານທຸລະກິດ ລວມໄປເຖິງ ການຄົ້ນຄວ້າອະນຸຍາດດຳເນີນທຸລະກິດທະນາຄານ ເຮັດໃຫ້ລະບົບທະນາຄານທຸລະກິດ ມີຄວາມເຂັ້ມແຂງ ແລະ ໝັ້ນຄົງໂດຍພື້ນຖານ.

ໃນໄລຍະຜ່ານມາ, ກົດໝາຍດັ່ງກ່າວໄດ້ຮັບການປັບປຸງແລ້ວ 1 ຄັ້ງ ໂດຍປັບປຸງຈາກສະບັບປີ 2006 ຊຶ່ງສະບັບປັດຈຸບັນ ແມ່ນສະບັບເລກທີ 56/ສພຊ, ລົງວັນທີ 7 ທັນວາ 2018. ຮ່າງກົດໝາຍສະບັບນີ້ ປະກອບມີທັງໝົດ 12 ພາກ, 14 ໝວດ ແລະ 114 ມາດຕາ. ໃນນັ້ນ, ໄດ້ເພີ່ມເຂົ້າໃໝ່ 1 ພາກ ແລະ 8 ມາດຕາ, ໄດ້ປັບປຸງ ຮຽບຮຽງ ເນື້ອໃນເກົ່າຄືນໃໝ່ ຈຳນວນ 51 ມາດຕາ ແລະ ຮັກສາເນື້ອໃນເກົ່າໄວ້ຈຳນວນ 55 ມາດຕາ (ທຽບກັບກົດໝາຍ ສະບັບເກົ່າ ມີ 11 ພາກ, 14 ໝວດ ແລະ 106 ມາດຕາ)

ເນື້ອໃນສຳຄັນທີ່ໄດ້ປັບປຸງ ມີດັ່ງນີ້: ພາກທີ I ບົດບັນຍັດທົ່ວໄປ (ປະກອບດ້ວຍ 7 ມາດຕາ, ປັບປຸງ 2 ມາດຕາ); ພາກທີ II ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ແລະ ໂຄງປະກອບການຈັດຕັ້ງ (ປະກອບດ້ວຍ 28 ມາດຕາ, ເພີ່ມໃໝ່ 3 ມາດຕາ ແລະ ປັບປຸງ 16 ມາດຕາ); ພາກທີ III ທຸລະກິດການທະນາຄານ ແລະ ການຂະຫຍາຍທຸລະກິດ (ປະກອບດ້ວຍ 13 ມາດຕາ, ປັບປຸງ 11 ມາດຕາ);ພາກທີ IV ການ ຮັກສາຄວາມໝັ້ນຄົງ, ການໂອນຮຸ້ນ, ການຄວບກິດຈະການ ແລະ ການຊື້-ຂາຍຊັບສິນທີ່ສຳຄັນຂອງທະນາຄານທຸລະກິດ (ປະກອບດ້ວຍ 16 ມາດຕາ, ປັບປຸງ 4 ມາດຕາ); ພາກທີ V ການບັນຊີ, ການເປີດເຜີຍຂໍ້ມູນ ຂອງທະນາຄານທຸລະກິດ ແລະ ການກວດສອບ ໂດຍບໍລິສັດກວດສອບ (ປະກອບດ້ວຍ 10 ມາດຕາ, ປັບປຸງ 3 ມາດຕາ):

ໄດ້ປັບປຸງມາດຕາກ່ຽວກັບການເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳຂອງທະນາຄານທຸລະກິດ ໂດຍໄດ້ເພີ່ມເນື້ອໃນວ່າ: ໃນກໍລະນີທີ່ຈຳເປັນສາຂາທະນາຄານທຸລະກິດຕ່າງປະເທດ ຍັງສາມາດເກັບຮັກສາເອກະສານ ແລະ ຂໍ້ມູນ ທຸລະກຳ ໄວ້ຢູ່ສຳນັກງານໃຫຍ່ຕື່ມບົນພື້ນຖານການອະນຸຍາດຂອງທະນາຄານ ແຫ່ງ ສປປ ລາວ. ການປັບປຸງດັ່ງກ່າວ ແມ່ນເພື່ອເປັນການສ້າງຄວາມຍືດຍຸ່ນໃຫ້ແກ່ສາຂາທະນາຄານທຸລະກິດຕ່າງປະເທດ; ພາກ ທີ VI ມາດຕະການແຕ່ຫົວທີ ແລະ ການແກ້ໄຂທະນາຄານ ທຸລະກິດທີ່ຢູ່ໃນພາວະວິກິດ (ປະກອບດ້ວຍ 9 ມາດຕາ, ເພີ່ມໃໝ່ 1 ມາດຕາ ແລະ ປັບປຸງ 3 ມາດຕາ); ພາກທີ VII ການຍຸບເລີກ, ການລົ້ມລະລາຍ ແລະ ການຊຳລະສະສາງ (ປະກອບດ້ວຍ 10 ມາດຕາ, ປັບປຸງ 8 ມາດຕາ) ພາກທີ VIII ສະມາຄົມທະນາຄານລາວເຂົ້າໃໝ່ (ປະກອບດ້ວຍ 3 ມາດຕາ); ພາກທີ IX ຂໍ້ຫ້າມ (ປະກອບດ້ວຍ 3 ມາດຕາ, ປັບປຸງ 2 ມາດຕາ (ພາກທີ X ການຄຸ້ມຄອງ ແລະ ການກວດກາທະນາຄານທຸລະກິດ (ປະກອບດ້ວຍ 11 ມາດຕາ ເພີ່ມໃໝ່ 1 ມາດຕາ)

ຮ່າງກົດໝາຍ ດັ່ງກ່າວປະກອບມີທັງໝົດ 12 ພາກ 14 ໝວດ ແລະ 114 ມາດຕາ. ໃນນັ້ນ, ໄດ້ເພີ່ມເຂົ້າໃໝ່ 1 ພາກ ແລະ 8 ມາດຕາ ໄດ້ປັບປຸງ ຮຽບຮຽງເນື້ອໃນເກົ່າຄືນໃໝ່ 51 ມາດຕາ ແລະ ຮັກສາເນື້ອໃນເກົ່າ ໄວ້ 55 ມາດຕາ ທຽບກັບກົດໝາຍສະບັບເກົ່າມີ 11 ພາກ 14 ໝວດ ແລະ 106 ມາດຕາ. ຊຶ່ງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບປັບປຸງນີ້ ຈະໄດ້ຖືກຮັບຮອງ ແລະ ນຳເຂົ້າສູ່ການຈັດຕັ້ງປະຕິບັດ, ສາມາດຄາດຄະເນຜົນໄດ້ຮັບດັ່ງນີ້: ຈະເຮັດໃຫ້ຂອດການສ້າງຕັ້ງ ຫຼືຂໍອະນຸຍາດດຳເນີນທຸລະກິດ ການທະນາຄານສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ); ຈະເຮັດໃຫ້ທະນາຄານທຸລະກິດທົ່ວລະບົບມີທຶນຈົດທະບຽນ ຫຼື ເງິນລົງທຶນຕ່ຳສຸດ ເພີ່ມຂຶ້ນ ຊຶ່ງຈະສົ່ງຜົນເຮັດໃຫ້ທະນາຄານມີຖານະການເງິນທີ່ເຂັ້ມແຂງຍິ່ງຂຶ້ນ; ຈະຊ່ວຍໃຫ້ການປ່ຽນແປງສະຖານະຂອງທະນາຄານທຸລະກິດ ມີບ່ອນອີງໃນການ ຈັດຕັ້ງປະຕິບັດ ແລະ ຊ່ວຍໃຫ້ການປ່ຽນແປງສະຖານະດັ່ງກ່າວໃຫ້ ມີຄວາມສະດວກ ແລະ ວອງໄວ ຂຶ້ນກວ່າເກົ່າ; ຈະເຮັດໃຫ້ຂໍ້ກຳນົດກ່ຽວກັບການແລກປ່ຽນ ເງິນຕາສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ); ຈະເຮັດໃຫ້ຂະບວນການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດການຍຸບເລີກ ແລະ ການລົ້ມລະລາຍຂອງ ທະນາຄານທຸລະກິດ ມີບ່ອນອີງທີ່ຄົບຖ້ວນ ແລະ ຊັດເຈນ ຍິ່ງຂຶ້ນ ໂດຍຈະຊ່ວຍໃຫ້ວຽກງານດັ່ງກ່າວ ມີຄວາມຄ່ອງຕົວຍິ່ງຂຶ້ນ ແລະ ຈະຊ່ວຍໃຫ້ມີບ່ອນອີງສະເພາະສຳລັບການເຄື່ອນໄຫວຂອງທະນາຄານທຸລະກິດສະເພາະ ແລະ ສະມາຄົມທະນາຄານລາວ.



ຫຼັງຈາກນັ້ນ, ໃນວັນທີ 17 ກໍລະກົດ 2023 ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ ໄດ້ຂຶ້ນຊີ້ແຈງຕໍ່ສະມາຊິກສະພາແຫ່ງຊາດ ທີ່ໄດ້ປະກອບຄຳເຫັນຕໍ່ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX. ໂດຍການເປັນປະທານຂອງ ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ. ຊຶ່ງເຫັນວ່າຜ່ານການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງຕໍ່ກັບກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ຂອງສະມາຊິກສະພາແຫ່ງຊາດ ໃນຄັ້ງວັນທີ 12 ກໍລະກົດ 2023 ທີ່ຜ່ານມານັ້ນ, ສາມາດສັງລວມໄດ້ໃນບາງກົນໄກຈັດຕັ້ງປະຕິບັດທີ່ກຳນົດໄວ້ໃນຮ່າງກົດໝາຍສະບັບນີ້ ແລະ ຜ່ານການຄົ້ນຄວ້າສັງລວມໃນ 74 ເນື້ອໃນທີ່ໄດ້ຄົ້ນຄວ້າໃນເບື້ອງຕົ້ນ ແມ່ນສາມາດສະຫຼຸບຕີລາຄາໄດ້ຄື: ເຫັນດີປັບປຸງ 32 ເນື້ອໃນທີ່ຕິດພັນກັບເນື້ອໃນ 21 ມາດຕາ ແລະ ໄດ້ສະເໜີຊີ້ແຈງບາງເນື້ອໃນ ແລະ ສະເໜີຮັກສາບາງເນື້ອໃນເກົ່າທີ່ຕິດພັນກັບ 42 ເນື້ອໃນ ແລະ ຕິດພັນກັບ 24 ມາດຕາ. ເນື້ອໃນການປະກອບຄຳເຫັນຈຳນວນໜຶ່ງ ແມ່ນທາງ ທຫລ ເຫັນດີປັບປຸງ ແລະ ຈະໄດ້ນຳໄປຜັນຂະຫຍາຍ ໃນນິຕິກຳລຸ່ມກົດໝາຍ.

ຜ່ານການລາຍງານໂດຍສັງເຂບຂອງ ທ່ານ ຜູ້ວ່າການ ທຫລ ຕໍ່ກອງປະຊຸມໃນການປັບປຸງບາງເນື້ອ ແລະ ຮັກສາໄວ້ບາງເນື້ອໃນ ຂອງການຄົ້ນຄວ້າການຮ່າງກົດໝາຍ ແລະ ເຫັນວ່າໄດ້ປັບປຸງຮຽບຮຽງເບື້ອງຕົ້ນຊຶ່ງມີ: ມາດຕາ 1, 3, 4, 5, 8 , 10, 12, 17, 20, 24, 25, 36, 53, 80, 83, 87, 88 ແລະ ມາດຕາ 98. ພ້ອມນັ້ນ, ກໍໄດ້ຕອບຄຳຊັກຖາມເພີ່ມເຕີມຂອງສະມາຊິກສະພາແຫ່ງຊາດທີ່ໃຫ້ຄວາມສົນໃຈ ຕໍ່ກັບຮ່າງກົດໝາຍດັ່ງກ່າວ. ຫຼັງຈາກນັ້ນ, ສະມາຊິກສະພາແຫ່ງຊາດ ກໍໄດ້ລົງຄະແນນສຽງຮັບຮອງເອົາຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບປັບປຸງໃໝ່ນີ້ ໂດຍມີທັງໝົດ 143 ສຽງ: ເຫັນດີ 133 ສຽງ ກວມເອົາ 93% ຂອງສຽງທັງໝົດ, ບໍ່ເຫັນດີ 10 ສຽງ ແລະ ບໍ່ອອກສຽງ 0 ສຽງ. ໂດຍປະຕິບັດຕາມລັດຖະທຳມະນູນແຫ່ງ ສປປ ລາວ ແລະ ກົດໝາຍຂອງສະພາແຫ່ງຊາດ ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015. ມາດຕາ 65 ວັກ 3 ທີ່ໄດ້ກຳນົດວ່າ ມະຕິຂອງກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ, ຖືວ່າກອງປະຊຸມໄດ້ຮັບຮອງເອົາກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເຫັນດີດ້ວຍຄະແນນສຽງ 133 ສຽງ ເທົ່າກັບ 93 % ຂອງສຽງທັງໝົດທີ່ຫຼາຍກວ່າເຄິ່ງໜຶ່ງ. ແຕ່ເຖິງຢ່າງໃດກໍຕາມ ຮ່າງກົດໝາຍດັ່ງກ່າວຍັງຕ້ອງໄດ້ສືບຕໍ່ປັບປຸງຕາມການ

ສະເໜີຂອງ ສະມາຊິກສະພາແຫ່ງຊາດ ພ້ອມທັງຈະໄດ້ຜ່ານຂັ້ນຕອນ ແລະ ກະບວນການຕ່າງໆ ຂອງການສ້າງ-ປັບປຸງກົດໝາຍ ເພື່ອອອກນຳໃຊ້, ຮັບໃຊ້ແກ່ສັງຄົມ.






ມາຮອດນີ້ ການຜ່ານຮ່າງກົດໝາຍ ວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ຂອງ ທະນາຄານແຫ່ງ ສປປ ລາວ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ກໍໄດ້ສິ້ນສຸດລົງ ແລະ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້. ຫຼັງຈາກນີ້, ກອງປະຊຸມດັ່ງກ່າວກໍ່ໄດ້ດຳເນີນສືບຕໍ່ໃນວາລະຕໍ່ໄປ ຕາມວາລະຂອງກອງປະຊຸມ.

**# ຂ່າວ-ພາບ ຈາກ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ.**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ